ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**Lao People’s Democratic Republic**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**Peace Independence Democracy Unity Prosperity**

## ໂຄງການ ສິ່ງແວດລ້ອມ ແລະ ສັງຄົມ ຢູ່ ສປປ ລາວ (ຄສລ)

## *Lao Environmental and Social (LEnS) Project*

# ແຜນການເຄື່ອນໄຫວ ແລະ ແຜນງົບປະມານ ປະຈຳປີ

# Annual Work- Budgetary Plan

## ສົກປີງົບປະມານ 2006-2007

## Fiscal Year 2006-2007

ກະກຽມໂດຍ: ໜ່ວຍງານ ຄຸ້ມຄອງໂຄງການ

**Prepared by: LEnS WMU**

ຕຸລາ **October, 2006**

# ບົດນຳ

ຢູ່ໃນແຜນການເຄື່ອນໄຫວ ແລະ ແຜນລາຍຮັບ-ລາຍຈ່າຍ ປະຈຳປີງົບປະມານ 2006-07 ຂອງໂຄງການ ສິ່ງແວດລ້ອມ ແລະ ສັງຄົມ ຢູ່ສປປລາວ (ຄສລ) ນີ້ໄດ້ເວົ້າລະອຽດ ກ່ຽວກັບ ການເຄື່ອນໄຫວ ແລະ ລາຍຮັບ ແລະ ລາຍຈ່າຍ ງົບປະມານ ໃນງວດສຸດທ້າຍ ຂອງສົກປີງົບປະມານ 2005-06 ແລະ ສົກປີງົບປະມານ 2006-07. ແຜນດັ່ງກ່າວ ໄດ້ຮ່າງຂື້ນ ໂດຍຫ້ອງການຄຸ້ມຄອງຄສລ ແລະ ໄດ້ນຳມາຄຳນຶງ ໃນລະດັບວິຊາການຫລາຍຄັ້ງ, ພາຍໃຕ້ການກວດແກ້ ຂອງຜູ້ຈັດການ ຄສລ ແລະ ທີ່ປຶກສາ ໂດຍປຶກສາຫາລືຢ່າງໃກ້ສິດ ທະນາຄານໂລກ ແລະ ສະຫລຸບສັງລວມນຳສະເໜີຕໍ່ຄະນະກຳມະການ ຊີ້ນຳຄສລ ແລະ ໄດ້ຮັບຮອງເອົາ ໃນກອງປະຊຸມຄັ້ງປະຖົມມະເລີກ ຂອງຄະນະກຳມະການຊີ້ນຳ ຄສລ ຄັ້ງວັນທີ 02/10/2006.

ແຜນດັ່ງກ່າວ ຈະປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການຈັດຕັ້ງຜັນຂະຫຍາຍ ບັນດາແຜນງານບູລິມະສິດ ຂອງລັດຖະບານ ໃຫ້ປະກົດຜົນເປັນຈິງ ໂດຍຄສລ ຈະມີພາລະບົດບາດ ໃນຖານະໃຫ້ບໍລິການແບບກອງທຶນຍ່ອຍ ເພື່ອສະໜອງທຶນຊ່ວຍເຫລືອລ້າ ໃຫ້ແກ່ຂະແໜງການ ຂອງລັດ ຂັ້ນສູນກາງ, 3 ແຂວງເປົ້າໝາຍ (ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ ເຊີ່ງລວມທັງ ບັນດາເມືອງ, ຊຸມຊົນ) ແລະ ອົງການຈັດຕັ້ງສັງຄົມຕ່າງໆ ທີ່ສະເໜີຂໍການຊ່ວຍເຫືອລ້າ ເພື່ອເປົ້າໝາຍການຄຸ້ມຄອງ ສິ່ງແວດລ້ອມ ໂດຍສະເພາະ ການປົກປັກຮັກສາຊີວະນາໆພັນ  ແລະ ແກ້ໄຂຄວາມທຸກ.

ແຜນດັ່ງກ່າວ ຈະເປັນບ່ອນອີງຫລັກ ໃນການເຄື່ອໄຫວ ແລະ ນຳໃຊ້ງົບປະມານ ໃຫ້ແກ່ພະນັກງານຫ້ອງການ ຄຸ້ມຄອງ ຄສລ ກໍ່ຄືຄະນະກຳມະການຊີ້ນຳໂຄງການ ແລະ ຄະນະປະສານງານຂອງໂຄງການ ໃນລະດັບແຂວງເປົ້າໝາຍ ໃນການຈັດຕັ້ງປະຕິບັດໂຄງການສົກປີງົບປະມານ 2006-07 ໃຫ້ສອດຄ່ອງກັບນະໂຍບາຍ, ລະບຽບການ ຂອງສປປລາວ ແລະ ຂໍ້ຕົກລົງ ລະຫວ່າງ ລັດຖະບານ ຂອງ ສປປ ລາວ ແລະ ສາມະຄົມສາກົນ ເພື່ອການພັດທະນາ (ທະນາຄານໂລກ) ຢ່າງມີປະສິດທິຜົນສູງ.

ແຜນດັ່ງກ່າວ ອາດມີການດັດແກ້ຕື່ມ ໃນລະຫວ່າງການຈັດຕັ້ງປະຕິບັດ ຖ້າເຫັນວ່າມີຄວາມຈຳເປັນ ເພື່ອໃຫ້ມີຄວາມແທດເໝາະກັບສະພາບຕົວຈິງ ຂອງສປປລາວ.

ນະຄອນຫລວງວຽງຈັນ, ວັນທີ່ 10 ກັນຍາ 2006

---

ທ່ານ ມູລິນ ສິນບັນດິດ,
ຮອງຫົວໜ້າ ອົງການ ວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອນ,
ປະທານ ຄະນະຊີ້ນຳໂຄງການ ສິ່ງແວດລ້ອມ ແລະ ສັງຄົມ ຢູ່ສປປ ລາວ

# ສາລະບານ


1. ພາກສະເໜີ ........ 5

1.1 ຄວາມເປັນມາຂອງໂຄງການ ........ 5

1.2 ຈຸດປະສົງ ແລະ ເນື້ອໃນຂອງແຜນການເຄື່ອນໄຫວແລະແຜນລາຍຮັບ-ລາຍຈ່າຍສະບັບນີ້ ........ 5

2. ແຜນດຳເນີນງານ ແຕ່ນີ້ ເຖິງ ວັນທີ 30 ກັນຍາ 2007 ........ 7

2.1 ແຜນວຽກ ປະຈຳ ສົກປີງົບປະມານ 2005-06 (ຕາຕະລາງເວລາ) ........ 7

2.2 ແຜນການເຄື່ອນໄຫວ ແລະ ແຜນງົບປະມານ ປະຈຳສົກປີ 2006-07 (ຕາຕະລາງເວລາ) ........ 9

3. ສັງລວມຫຍໍ້ ການຈັດຕັ້ງປະຕິບັດຫລັກ ຂອງຄສລ ........ 11

3.1 ການສ້າງຕັ້ງ ລະບົບ ການຄຸ້ມຄອງ-ບໍລິຫານ ຄສລ ........ 11

3.1.1 ວຽກງານຄຸ້ມຄອງ-ບໍລິຫານ ຄສລ ພາຍໃຕ້ບ້ວງບໍລິຫານທີ 3 ........ 11

3.1.2 ການພັດທະນາ ລະບົບການບັນຊີໂຄງການ ........ 11

3.1.3 ປັບປຸງ ບັນດາເອກກະສານ ຂອງຄສລ ໃຫ້ສົມບູນ ........ 12

3.1.4 ການສ້າງສູນຂໍ້ມູນຂ່າວສານແກ່ມວນຊົນ ........ 12

3.1.5. ການສ້າງເວັບໄຊ ........ 13

3.1.6 ການຝຶກອົບຮົມເບື້ອງຕົ້ນ ໃນການປະຕິບັດໂຄງການ ........ 13

3.1.6 ດຳເນີນກອງປະຊຸມແຈ້ງຈຸດປະສົງໂຄງການ ........ 13

3.1.8. ສ້າງລະບົບການປະເມີນຜົນ ແລະ ການຕິດຕາມກວດກາ ........ 14

3.2 ການກະກຽມ ແລະ ປະຕິບັດ ກິດຈະກຳສະໜັບສະໜູນ ສຳລັບໂຄງການຍ່ອຍ ........ 14

3.2.1. ການກະກຽມດ້ານວິຊາການ ພາຍໃຕ້ບ້ວງນະໂຍບາຍ ແລະ ຊີວະນາໆພັນ ........ 14

3.2.2. ສ້າງປຶ້ມແນະນຳວິຊາການເພື່ອລິເລີ່ມການກຽມປຶ້ມສະເໜີຂໍທຶນຊ່ວຍເຫລືອຈາກຄສລ ........ 15

3.2.3 ກຳນົດຂອບວຽກບ້ວງນະໂຍບາຍຄັ້ງລ້າສຸດ (ການຄຸ້ມຄອງອ່າງຮັບນ້ຳແບບ
ປະສົມປະສານ, ການຈັດສັນຍົກຍ້າຍ, ແລະ ຂະແໜງການພະລັງງານໄຟຟ້າ ........ 15

3.2.4. ການເຮັດສັນຍາໂຄງການຍ່ອຍຄັ້ງທຳອິດ ........ 15

3.3 ການປະຕິບັດຂໍ້ຮຽກຮ້ອງອື່ນໆຂອງໂຄງການ ........ 17

3.3.1 ການກະກຽມ ປຶ້ມລາຍງານການຕິດຕາມກວດກາ ດ້ານການເງິນ ........ 17

3.3.2 ການກະກຽມປຶ້ມລາຍງານປະຈຳປີ ........ 17

3.3.3 ການກະກຽມແຜນດຳເນີນງານ ປະຈຳປີ ........ 17

3.3.4 ການກວດສອບດ້ານການເງິນ ........ 18

3.3.5. ການຈັດກອງປະຊຸມ ຄະນະກຳມະການຊີ້ນຳຄສລ ........ 18

4. ແຜນດ້ານລາຍຮັບ ແລະ ລາຍຈ່າຍ ........ 18
4.1 ພາກສະເໜີ ........ 18
4.2 ການຄາດຄະເນງົບປະມານ ສຳລັບງວດ 3rd ແລະ 4th ຂອງສົກງົບປະມານ 2005-2006 ........ 19
4.3 ຄາດຄະເນສົກປີງົບປະມານ 2006-2007 ........ 26

## ເອກະສານຊ້ອນທ້າຍ

ເອກະສານ ຊ້ອນທ້າຍ1. ຄູ່ຮ່ວມປະຕິບັດ ແລະ ຄຸ້ມຄອງ ຄສລ ........ 34
ເອກະສານ ຊ້ອນທ້າຍ2. ການກຽມການເພື່ອຕິດຕາມຜົນ ........ 37
ເອກະສານ ຊ້ອນທ້າຍ3. ບົດບັນທຶກ ກອງປະຊຸມຄັ້ງປະຖົມມະເລີກ ຂອງຄະນະຊີ້ນຳ ຄສລ... 38

# 1. ພາກສະເໜີ

## 1.1 ຄວາມເປັນມາຂອງໂຄງການ

ໂຄງການ ສິ່ງແວດລ້ອມ ແລະ ສັງຄົມ ຢູ່ສປປ ລາວ (ຄສລ) ໄດ້ສ້າງຂຶ້ນໃນຖານະເປັນກິດຈະກຳເພີ້ມໃສ່ ໂຄງການນ້ຳເທີນ 2 ຕາມທີ່ໄດ້ກຳນົດໃນຈົດໝາຍຂອງລັດຖະບານ ແຫ່ງສປປລາວ ກ່ຽວກັບ ນະໂຍບາຍຈັດຕັ້ງປະຕິບັດໂຄງການນ້ຳເທີນ 2 ເຊັນໂດຍ ທ່ານ ຮອງນາຍົກລັດຖະມົນຕີ.

ໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ ສ ປປ ລາວ (ຄສລ) ແມ່ນນອນໃນກົນໄກ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ເໜືອນກອງທຶນຍ່ອຍສະໜອງທຶນສະເພາະ ທີ່ໄດ້ອອກແບບຄັ້ງແລກ ຢູ່ສປປ ລາວ ແລະ ໄດ້ຮັບທຶນຈາກທະນາຄານໂລກ (ສາມະຄົມເພື່ອການພັດທະນາ ສາກົນ) ຕາມສັນຍາຊ່ວຍເຫລືອລ້າ ເລກທີ່ H177-LA ທີ່ໄດ້ເຊັນກັນລະຫ່ວາງ ລັດຖະບານແຫ່ງ ສ ປປ ລາວ (ຕາງໜ້າໂດຍ ກະຊວງການເງິນ) ແລະ ສາມະຄົມເພື່ອການພັດທະນາສາກົນ (ທະນາຄານໂລກ) ລົງວັນທີ 15 ກັນຍາ 2005.

ແຜນການ ຈັດຕັ້ງປະຕິບັດ ໂຄງການ (PIP) ໄດ້ຮ່າງຂື້ນ ສຳລັບເປັນພື້ນຖານການເຄື່ອນໄຫວໂຄງການ. ໃນແຜນຈັດຕັ້ງປະຕິບັດໂຄງການດັ່ງກ່າວ ໄດ້ກຳນົດຈະແຈ້ງ ກ່ຽວກັບ ຂັ້ນຕອນການກວດກາການສະໜອງທຶນຊ່ວຍເຫຼືອລ້າ ສຳລັບໂຄງການຍ່ອຍ, ເງື່ອນໄຂຂໍທຶນ, ຂັ້ນຕອນການຄັດເລືອກ/ການອະນຸມັດ, ຄວາມຮຽກຮ້ອງຕ້ອງໃນການປ້ອງກັນຜົນກະທົບ, ການຂື້ນແຜນການດ້ານການເງິນ ແລະ ວາງລະບຽບການຈັດຊື້-ຈັດຈ້າງ. ແຜນຈັດຕັ້ງປະຕິບັດໂຄງການ ຍັງລວມເອົາຄູ່ມືການຈັດຕັ້ງປະຕິບັດ ໂຄງການ, ຄູ່ມືການ ຄຸ້ມຄອງການຈັດຊື້-ຈັດຈ້າງ ແລະ ການເງິນ ສຳລັບ ສອງບ້ວງວິຊາ ການຊ່ວຍເຫລືອລ້າ. ໃນໄລຍະເລີ່ມຕົ້ນການຈັດຕັ້ງປະຕິບັດ ຂອງບ້ວງວິຊາການຊ່ວຍເຫລືອລ້າ ນີ້ຈະໄດ້ຈັດຝຶກອົບຮົມ ແລະ ໃຫ້ການຊ່ວຍເຫລືອທາງດ້ານວິຊາການຕື່ມ ໃຫ້ແກ່ໜ່ວຍງານຄຸ້ມຄອງຄສລ ແລະ ອຳນາດການປົກຄອງທ້ອງຖິ່ນ ເພື່ອອຳນວຍຄວາມສະດວກ ໃນພັດທະນາ ແລະ ຊອກຕະຫລາດ ເພື່ອໃຫ້ການສະໜັບສະໜູນ ແລະ ນຳໄປຈັດຕັ້ງປະຕິບັດ .

## 1.2 ຈຸດປະສົງ ແລະ ເນື້ອໃນ ຂອງແຜນການເຄື່ອນໄຫວ ແລະ ແຜນລາຍຮັບ-ລາຍຈ່າຍສະບັບນີ້

ແຜນການເຄື່ອນໄຫວ ແລະ ແຜນງົບປະມານ ປະຈຳປີສະບັບນີ້ ໄດ້ສ້າງຂື້ນເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ບັນດາເນື້ອໃນເອກະສານດັ່ງນີ້:

1. ດຳລັດ ວ່າດ້ວຍ ກອງທຶນປົກປັກຮັກສາສິ່ງແວດລ້ອມ ເລກທີ 146/ນຍ, ລົງວັນທີ 6 ມິຖຸນາ 2005;

2. ສັນຍາຊ່ວຍເຫຼືອລ້າ ສຳລັບໂຄງການສິ່ງແວດລ້ອມ ແລະ ສັງຄົມ ຢູ່ສປປ ລາວ ເລກທີ H177-LA ລະຫ່ວາງລັດຖະບານແຫ່ງ ສ ປປ ລາວ ແລະ ສາມະຄົມເພື່ອການພັດທະນາສາກົນ(ທະນາຄານໂລກ) ລົງວັນທີ 15 ສິງຫາ 2005;
3. ສັນຍາໃຫ້ທຶນຊ່ວຍເຫຼືອລ້າຕໍ່ ລະຫວ່າງກະຊວງການເງິນ ແຫ່ງ ສປປ ລາວ ແລະ ກອງທຶນປົກປັກຮັກສາສິ່ງແວດລ້ອມ ລົງວັນທີ 7 ເມສາ 2006;
4. ເອກະສານ ປະເມີນໂຄງການ;
5. ແຜນຈັດຕັ້ງປະຕິບັດໂຄງການ ແລະ ເອກະສານຄັດຕິດ, ຄູ່ມືດຳເນີນງານ, ຄູ່ມືການຄຸ້ມຄອງດ້ານການເງິນ ແລະ ການຈັດຊື້-ຈັດຈ້າງ.

ຜູ້ມີສ່ວນຮ່ວມ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໂຄງການ ມີລາຍຊື່ ຢູ່ເອກະສານ ຕິດຄັດ1.

ຄສລ ຍັງຢູ່ໃນໄລຍະເລີ່ມຕຳນ. ແຜນການເຄື່ອນໄຫວ ແລະ ແຜນງົບປະມານປະຈຳປີ ດັ່ງກ່າວແມ່ນໄດ້ກະກຽມ ສະເພາະ ງວດ III ແລະ ງວດ IV ຂອງສົກປີ 2005-2006 ແລະ ສົກປີ 2006-2007. ແຜນດັ່ງກ່າວ ໄດ້ຮ່າງຂື້ນໂດຍໜ່ວຍງານຄຸ້ມຄອງຄສລ, ພາຍໃຕ້ການກວດແກ້ ຂອງທີ່ປຶກສາ ແລະ ຜູ້ຈັດການຄສລ ໂດຍປຶກສາຫາ ລືຢ່າງໃກ້ສິດທີມງານ, ຫ້ອງການ ກປສ, ພາກສ່ວນທີ່ກ່ຽວຂ້ອງ ແລະ ທະນາຄານໂລກ ເຊີ່ງສະຫລຸບສັງລວມ ນຳສະເໜີຕໍ່ຄະນະກຳມະການຊີ້ນຳໂຄງການ ເພື່ອຂໍການອະນຸມັດ ໃນກອງປະຊຸມຄັ້ງປະຖົມມະເລີກ ຂອງຄະນະກຳມະການຊີ້ນຳ ຄສລ.

# 2. ແຜນດຳເນີນງານ ແຕ່ນີ້ ເຖິງ ວັນທີ 30 ກັນຍາ 2007

## 2.1 ແຜນວຽກ ປະຈຳ ສົກປີງົບປະມານ 2005-06 (ຕາຕະລາງເວລາ)

| ລ/ດ | ກິດຈະກຳ | 2006 | | | | | | ໝາຍເຫດ |
|---|---|---|---|---|---|---|---|---|
| | | ງວດ 3 | | | ງວດ 4 | | | |
| | | 4 | 5 | 6 | 7 | 8 | 9 | |
| C1&2 | ບ້ວງວິຊາການ 1 ແລະ 2: ບ້ວງ 1 “ການຈັດຕັ້ງປະຕິບັດນະໂຍບາຍ ແລະ ປັບປຸງຄວາມອາດ ສາມາດ (ບ້ວງ ນະໂຍບາຍ) ” ແລະ ບ້ວງ 2 “ການລົງທຶນ ແກ່ຊີວະນາໆພັນ ແລະ ຊຸມຊົນ (ບ້ວງຊີວະນາໆພັນ)” | | | | | | | |
| 1.1 | ປະສານສົມທົບ, ອຳນວຍຄວາມສະດວກ ແລະ ປຶກສາຫາລື ກັບບັນດາຂະແໜງການຫລັກ, ແຂວງເປົ້າໝາຍ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ເພື່ອກະກຽມບົດສະເໜີ ຂໍການຊ່ວຍເຫລືອລ້າ ຈາກທັງ 2 ບ້ວງ ວິຊາການ | | ■ | ■ | ■ | ■ | | |
| 1.2 | ຮ່າງຄູ່ມືແນະນຳດ້ານວິຊາການ ໃນການຮ່າງ ບົດສະເໜີຂໍທຶນຊ່ວຍເຫລືອລ້າ ຈາກ ຄສລ. | | ■ | ■ | ■ | ■ | ■ | |
| 1.3 | ຮ່າງແຜນພັບ ຂອງ ຄສລ, ຂອງບ້ວງນະໂຍບາຍ ແລະ ບ້ວງຊີວະນາໆພັນ | | | | ■ | ■ | ■ | |
| 1.4 | ລົງກວດກາ ພື້ນທີ່ໂຄງການເບື້ອງຕົ້ນ ຢູ່ ແຂວງ ບໍລິຄຳໄຊ, ຄຳມ່ວນ ແລະ ສະຫັວນ ນະເຂດ ເພື່ອປຶກສາຫາລືເບື້ອງຕົ້ນ ກ່ຽວກັບ ການຂໍສະເໜີການຊ່ວຍ ເຫລືອລ້າ ຈາກບ້ວງນະໂຍບາຍ ແລະ ຊີວະນາໆພັນ | | | | | ■ | ■ | |
| 1.5 | ຮ່າງໜ້າວຽກ ສຳລັບການກວດກາ ວິຊາການ ເພື່ອກັ່ນກອງ-ຄັດເລືອກ ບົດສະເໜີຂໍການ ຊ່ວຍເຫລືອລ້າ ຂະນາດໃຫຍ່ ຈາກບ້ວງ ນະໂຍບາຍ. | | | | | ■ | ■ | |
| 1.6 | ສະຫລຸບສັງລວມ ນຳສະເໜີ ບົດສະເໜີຂໍທຶນຊ່ວຍເຫຼືອ (ລວມມູນຄ່າ ຂະນາດນ້ອຍ ແລະ ໃຫ່ຍ) | | | | | ■ | ■ | |
| 1.7 | ຮ່າງ ແຜນຍຸດທະສາດການສະໜອງທຶນ ຂອງຄສລ ໃນໄລຍະ 5 ປີ | | | | | ■ | ■ | |
| 1.8 | ຮ່າງແຜນເຄື່ອນໄຫວລະອຽດ ຂອງບ້ວງ ນະໂຍບາຍ ແລະ ຊີວະນາໆພັນ ສົກປີ 2006-07 | | | | | ■ | ■ | |
| 1.9 | ກຳນົດໜ້າວຽກ ສຳລັບ ການສຶກສາຂໍ້ມູນພື້ນຖານ | | | | | ■ | ■ | |
| C 3: | ບ້ວງບໍລິຫານ: ບ້ວງ ການຄຸ້ມຄອງ ແລະ ການຕິດຕາມກວດກາ | | | | | | | |
| 3.1 | ຈັດກອງການຝຶກອົບຮົມ ເບື້ອງຕົ້ນ ເພື່ອສະເໜີ: ໂດຍຫຍໍ້ກ່ຽວກັບໂຄງການ, ຫລັກ ການການຄຸ້ມຄອງການເງິນ ແລະ ການເບີກຈ່າຍ, ການຈັດຊື້-ຈັດຈ້າງ ແລະ ປະສົບ ການຂອງໂຄງການທະນາຄານໂລກອື່ນໆ. | | ■ | | | | | ໄດ້ຈັດແລ້ວ ໃນເດືອນ 05, 2006 |
| 3.2 | ຮ່າງແຜນການເຄື່ອນໄຫວ ແລະ ແຜນງົບປະມານ ຂອງໂຄງການ ປະຈຳສົກປີ 2006-2007 | | | ■ | ■ | | | |
| 3.3 | ສ້າງລະບົບຄຸ້ມຄອງ ຂໍ້ມູນຂ່າວສານໂຄງການ (ຖານຂໍ້ມູນ ແລະ ເປີດແວບໄຊ) | | | | | ■ | ■ | |

| ລ/ດ | ກິດຈະກຳ | 2006 | | | | | | ໝາຍເຫດ |
|---|---|---|---|---|---|---|---|---|
| | | ງວດ 3 | | | ງວດ 4 | | | |
| | | 4 | 5 | 6 | 7 | 8 | 9 | |
| 3.4 | ປັບປຸງ ແຜນຈັດຕັ້ງປະຕິບັໂຄງການ, ຄູ່ມື ດຳເນີນໂຄງການ, ດ້ານການເງິນ ແລະ ການຈັດຊື້-ຈັດຈ້າງ(ທັງພາສາອັງກິດ ແລະ ລາວ) ໃຫ້ສົມບູນ. | | | | | | | |
| 3.5 | ດຳເນີນກອງປະຊຸມ ຄັ້ງປະຖົມມະເລີກ ຂອງຄະນະຊີ້ນຳໂຄງການ | | | | | | | |
| 3.6 | ດຳເນີນກອງປະຊຸມແຈ້ງຈຸດປະສົງ ຄສລ. | | | | | | | |
| 3.7 | ຈັດຝຶກອົບຮົມ ດ້ານວິຊາການ ໃຫ້ແກ່ ພະນັກງານ ຫ້ອງການ ຄຸ້ມຄອງ-ບໍລິຫານ ຄສລ. | | | | | | | |
| 3.8 | ຈັດຝຶກອົບຮົມ ດ້ານວິຊາການ ໃນການຮ່າງບົດສະເໜີ ຂໍການຊ່ວຍເຫລືອລ້າ ໃຫ້ແກ່ ພະນັກງານ ຂະແໜງການຫລັກ ຂອງໂຄງການ. | | | | | | | |
| 3.9 | ການວິໃຈຂໍ້ມູນພື້ນຖານສຳລັບການຕັດສິນໃຈໂຄງການບ່ອຍ (ການວິໃຈຄັ້ງແລກ) | | | | | | | |
| 3.10 | ດຳເນີນກອງປະຊຸມຄະນະກຳມະການຊີ້ນຳ ໂຄງການ ຄັ້ງທີ 2. | | | | | | | |
| 3.11 | ກອງປະຊຸມເຜີຍແຜ່: ບັນດາເອກກະສານໂຄງການ ຂອງຄສລ, ບົດລາຍງານ ການຕິດຕາມ ກວດກາ ສິ່ງແວດລ້ອມ, ດຳລັດ ກປສ, ນະໂຍບາຍ ການພັດທະນາໄຟຟ້າ, ບົດລາຍງານ ຜົນການຄົ້ນຄ້ວາ ສາຍກ່ຽວພັນ ລະຫວ່າງ ສິ່ງແວດລ້ອມ ກັບຄວາມທຸກຍາກ, ດຳລັດ ຍົກ ຍ້າຍຈັດສັນ. | | | | | | | |
| 3.12 | ການເຄື່ອນໄຫວບ້ວງວິຊາການ: ການປັບປຸງຫ້ອງການ ເປັນຕົ້ນການປະກອບ ອຸປະກອນ, ພາຫານະ, ການໃຊ້ຈ່າຍ ພາຍໃນຫ້ອງການ(ການສ້ອມແປງ, ການປະກອບເຄື່ອງຫ້ອງການ, ການລົງພາກສະໜາມ), ເງິນເດືອນພະນັກງານ ຄສລ. | | | | | | | |
| 3.13 | ການປະເມີນ ແລະ ຮ່າງບົດລາຍງານ ປະຈຳເດືອນ ເພື່ອລາຍງານຕໍ່ ຄະນະກຳມະການຊີ້ນຳໂຄງການ, ກປສ. | | | | | | | |
| 3.14 | ການປະເມີນ ແລະ ຮ່າງບົດລາຍງານ ປະຈຳງວດ ເພື່ອລາຍງານຕໍ່ ຄະນະກຳມະການ ຊີ້ນຳໂຄງການ, ກປສ, ແລະ ທະນາຄານໂລກ. | | | | | | | |
| 3.15 | ການປະເມີນ ແລະ ຮ່າງບົດລາຍງານ ປະຈຳປີ ເພື່ອລາຍງານຕໍ່ ຄະນະກຳມະການ ຊີ້ນຳໂຄງການ, ກປສ, ແລະ ທະນາຄານໂລກ. | | | | | | | |

## 2.2 ແຜນການເຄື່ອນໄຫວ ແລະ ແຜນງົບປະມານ ປະຈຳສົກປີ 2006-07 (ຕາຕະລາງເວລາ)

| ລ/ດ | ກິດຈະກຳ | 2006 | | | 2007 | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|
| | | ງວດ 1 | | | ງວດ 2 | | | ງວດ 3 | | ງວດ 4 | | | | |
| | | 10 | 11 | 12 | 01 | 02 | 03 | 04 | 05 | 06 | 07 | 08 | 09 | |
| C 1 & 2 | **ບ້ວງວິຊາການ 1 ແລະ 2: ບ້ວງ 1 "ການຈັດຕັ້ງປະຕິບັດນະໂຍບາຍ ແລະ ປັບປຸງຄວາມອາດ ສາມາດ (ບ້ວງ ນະໂຍບາຍ) " ແລະ ບ້ວງ 2 "ການລົງທຶນ ແກ່ຊີວະນາໆພັນ ແລະ ຊຸມຊົນ (ບ້ວງຊີວະນາໆພັນ)"** | | | | | | | | | | | | | |
| 1.1 | ປັບປຸງກອບວຽກ ຂອງບ້ວງ ນະໂຍບາຍ (ເປັນຕົ້ນ ກອບວຽກໃນການຄຸ້ມຄອງ ອ່າງຮັບນ້ຳ ນ້ຳເທີນ-ນ້ຳກະດິງ ແບບປະສົມປະສານ; ການຍົກຍ້າຍຈັດສັນ, ການພັດທະນາໄຟຟ້າ ນ້ຳຕົກ | | | | | | | | | | | | | |
| 1.2 | ປະສານສົມທົບ, ອຳນວຍຄວາມສະດວກ ແລະ ປຶກສາຫາລື ກ່ຽວກັບ ບົດສະເໜີຫລັກ ສຳລັບ ບ້ວງນະໂຍບາຍ ເພື່ອງ່າຍໃນການຮ່າງບົດ ສະເໜີ ຂອງບັນດາຂະແໜງການ ຫລັກ ແລະ ແຂວງເປົ້າໝາຍ. | | | | | | | | | | | | | |
| 1.3 | ດຳເນີນການກວດກາ ວິຊາການ ເພື່ອກັ່ນກອງ-ຄັດເລືອກ ບົດສະເໜີຂໍການ ຊ່ວຍເຫລືອລ້າ ຂະນາດ ໃຫຍ່ ຈາກບ້ວງ ນະໂຍບາຍ ແລະ ບ້ວງ ຊີວະນາໆພັນ. | | | | | | | | | | | | | |
| 1.4 | ລົງເຮັດວຽກພາກສະໜາມ ເພື່ອກວດກາ ເຂດໂຄງການ ບ້ວງຊີວະນາໆພັນ. | | | | | | | | | | | | | |
| 1.5 | ດຳເນີນການອະນຸມັດ ບົດສະເໜີ ເພື່ອຈັດຕັ້ງປະຕິບັດ ໂຄງການຍ່ອຍ (ລວມທັງ 2 ການຂໍການຊ່ວຍເຫລືອລ້າ ຂະນາດນ້ອຍ ແລະ ໃຫຍ່) | | | | | | | | | | | | | |
| 1.6 | ເຮັດສັນຍາ ດ້ານການເງິນ ແລະ ການຈັດຊື້-ຈັດຈ້າງ ກັບໂຄງການຍ່ອຍ ທີ່ໄດ້ຮັບການອະນຸມັດ ໃຫ້ການຊ່ວຍເຫລືອລ້າ | | | | | | | | | | | | | |
| 1.7 | ດຳເນີນການຝຶກອົບຮົມ ວິຊາການ ດ້ານຈັດຕັ້ງປະຕິບັດໂຄງການຍ່ອຍ | | | | | | | | | | | | | |
| 1.8 | ການຈັດຕັ້ງປະຕິບັດໂຄງການຍ່ອຍ ທີ່ໄດ້ຮັບການອະນຸມັດແລ້ວການຊ່ວຍເຫລືອ ລ້າ | | | | | | | | | | | | | |
| 1.9 | ດຳເນີນຂະບວນການຕິດຕາມກວດກາ ແລະ ການປະເມີນຜົນ | | | | | | | | | | | | | |
| 1.10 | ດຳເນີນການກວດຊອບ ແລະ ການປະເມີນຄັ້ງສຸດທ້າຍ ບັນດາໂຄງການຍ່ອຍ | | | | | | | | | | | | | |

| ລ/ດ | ກິດຈະກຳ | 2006 | | | 2007 | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|---|
| | | ງວດ 1 | | | ງວດ 2 | | | ງວດ 3 | | ງວດ 4 | | | | |
| | | 10 | 11 | 12 | 01 | 02 | 03 | 04 | 05 | 06 | 07 | 08 | 09 | |
| C3: | ບ້ວງບໍລິຫານ: ບ້ວງ ການຄຸ້ມຄອງ ແລະ ການຕິດຕາມກວດກາ | | | | | | | | | | | | | |
| 3.1 | ກະກຽມ ກອງປະຊຸມ ຄະນະຊີ້ນຳ ໂຄງການ ໃນແຕ່ລະທ້າຍງວດ | | | | | | | | | | | | | |
| 3.2 | ບົດລາຍງານ ງວດ | | | | | | | | | | | | | |
| 3.3 | ບົດລາຍງານປີ | | | | | | | | | | | | | |
| 3.4 | ສືບຕໍ່ ສ້າງລະບົບຄຸ້ມຄອງ ຂໍ້ມູນຂ່າວສານໂຄງການ (ຖານຂໍ້ມູນ ແລະ ເປີດແວບໄຊ) . | | | | | | | | | | | | | |
| 3.5 | ສືບຕໍ່ ດຳເນີນການວິໃຈຂໍ້ມູນພື້ນຖານສຳລັບການຕັດສິນໃຈໂຄງການບ່ອບ (ການວິໃຈຄັ້ງແລກ) | | | | | | | | | | | | | |
| 3.6 | ດຳເນີນການກວດສອບປະຈຳປີ | | | | | | | | | | | | | |
| 3.7 | ຈັດ ທັດສະນະສຶກສາ ສຳລັບ ຄະນະຊີ້ນຳໂຄງການ ແລະ ພະນັກງານວິຊາການ | | | | | | | | | | | | | |
| 3.8 | ກະກຽມ ກອງປະຊຸມປຶກສາຫາລື ປະຈຳປີ ສຳລັບ ຜູ້ມີສ່ວນຮ່ວມໂຄງການ | | | | | | | | | | | | | |

# 3. ສັງລວມຫຍໍ້ ການຈັດຕັ້ງປະຕິບັດຫລັກ ຂອງຄສລ

## 3.1 ການສ້າງຕັ້ງ ລະບົບ ການຄຸ້ມຄອງ-ບໍລິຫານ ຄສລ

### 3.1.1 ວຽກງານຄຸ້ມຄອງ-ບໍລິຫານ ຄສລ ພາຍໃຕ້ບ້ວງບໍລິຫານທີ 3

ພາຍຫລັງສັນຍາຊ່ວຍເຫືລລ້າ ສໍາລັບ ຄສລ ໄດ້ມີຜົນບັງຄັບໃຊ້ ໃນວັນທີ 14 ເມສາ 2005, ກໍ່ໄດ້ດໍາເນີນການຄັດເລືອກປະກອບພະນັກງານສະເພາະເຂົ້າໜ່ວຍງານ ຄຸ້ມຄອງຄສລ ເພື່ອດໍາເນີນການເຄື່ອນໄຫວ ຈັດຕັ້ງປະຕິບັດວຽກຕ່າງໆ ຂອງຄສລ ເຊິ່ງມີຫ້ອງການຢູ່ຕຶກ 100 ຂອງອວຕສ, ສໍານັກງານນາຍົກລັດຖະມົນຕີ ໂດຍໃຫ້ການບໍລິການແບບກອງທຶນຍ່ອຍ ນອນໃນ ລະບົບກອງທຶນປົກປັກຮັກສາສິ່ງແວດລ້ອມ. ໜ່ວຍງານຄຸ້ມຄອງຄສລ ເປັນຜູ້ປະຕິບັດທຸກໆກິດຈະ ກໍາ ໂຄງການ ໂດຍປະສານສົມຢ່າງໃກ້ສິດກັບ ຫ້ອງການ ກປສ, ຄະນະກໍາມະການຊີ້ນໍາ ຄສລ, ທະນາຄານໂລກ ແລະ ນໍາສະເໜີບາງວຽກທີ່ເຫັນວ່າຈໍາເປັນ ຕໍ່ວາລະກອງປະຊຸມ ສະພາບໍລິຫານ ກປສ ເພື່ອຂໍການອະນຸມັດສຸດທ້າຍ.

ເພື່ອເຮັດໃຫ້ວຽກງານ/ກິດຈະກໍາ ຄສລ ໄດ້ດໍາເນີນໄປຢ່າງມີປະສິດທິຜົນສູງນັ້ນ, ໜ່ວຍ ງານຄຸ້ມຄອງຄສລ ຕ້ອງໄດ້ປະກອບເຄື່ອງຮັບໃຊ້ຫ້ອງການ ແລະ ອຸປະກອນອັນຈໍາເປັນ ເປັນຕົ້ນ ລົດໃຫຍ່ 1 ຄັນ ສໍາລັບຫ້ອງການ, ລົດຈັກ 3 ຄັນ (1 ຄັນ ຕໍ່ 1 ແຂວງ ເປົ້າໝາຍ) ຫາກເຫັນ ວ່າມີຄວາມຈໍາເປັນ.

ໃນໄລຍະລິເລີ່ມໂຄງການ ເຫັນວ່າມີສິ່ງທ້າທ້າຍ ທັງດ້ານວິຊາການ ກໍ່ຄືດ້ານການບໍລິຫານ ຫລາຍໆຢ່າງ ທີ່ຫ້ອງການຄສລ ໄດ້ປະເຊີນໜ້າ ກໍ່ເນື່ອງຈາກວ່າ ຄສລ ເປັນໂຄງການອອກແບບ ໃໝ່ ໃນສປປ ລາວ, ໂດຍສະເພາະ ໃນໄລຍະນີ້ ກໍ່ໄດ້ປະເຊີນໜ້າບັນຫາ ການດໍາເນີນການ ການຈັດຊື້-ຈັດຈ້າງ ແລະ ອາດເກີດຂຶ້ນກັບຂະບວນການປ່ອຍເງິນຊ່ວຍເຫລືອລ້າ ສໍາລັບໂຄງການ ຍ່ອຍ ທີ່ໄດ້ຮັບການອະນຸມັດໃຫ້ການຊ່ວຍເຫລືອລ້າ ເຊິ່ງສະເໜີມາຈາກພາກສ່ວນກ່ຽວຂ້ອງຕ່າງໆ.

### 3.1.2 ການພັດທະນາ ລະບົບການບັນຊີໂຄງການ

ໜ່ວຍງານຄຸ້ມຄອງຄສລ ກໍ່ເຊັ່ນດຽວກັນ ກັບຫ້ອງການ ກປສ ຕ້ອງໄດ້ລົງໄປແກມ ດ້ານ ການບັນຊີ ເພື່ອເປັນລະບົບການຄຸ້ມຄອງການບັນຊີ ທີ່ເອກກະພາບກັນ. ຫົວໜ້າຫ້ອງການ ຄສລ ຈະຕ້ອງເຮັດວຽກຢ່າງໃກ້ສິດ ແລະ ລາຍງານ ຕໍ່ຫ້ອງການກປສ (ຕໍ່ສະພາບໍລິຫານ ກປສ) ແລະ ຄະນະກໍາມະການຊີ້ນໍາໂຄງການ ເປັນລາຍເດືອນ (ພາສາລາວ), ສໍາລັບບົດລາຍງານ ປະຈໍາ ງວດ ແລະ ປະຈໍາປີ (ເປັນພາສາລາວ ແລະ ອັງກິດ) ລາຍງານໃຫ້ສະພາບໍລິຫານ ກປສ, ຄະນະ ກໍາມະການຊີ້ນໍາ ຄສລ ແລະ ທະນາຄານໂລກ.

ໃນໄລຍະ ການພັດທະນາ ແລະ ການສ້າງລະບົບການຮັບຄຳຮ້ອງ ໃນຕໍ່ໜ້າໃຫ້ໄດ້ດີນັ້ນ, ເຫັນວ່າມີຄວາມຈຳເປັນຕ້ອງດຳເນີນບັນດາກິດຈະກຳບາງຢ່າງຕື່ມ ເພື່ອເຮັດລະບົບ ໄດ້ເຄື່ອນໄຫວຢ່າງເຕັມສ່ວນ ເຊັ່ນ :

- ຝຶກອົບຮົມ ໃຫ້ແກ່ພະນັກງານ ດ້ານການເງິນ ແລະ ການບັນຊີ ຂອງຫ້ອງການຄສລ, ລວມທັງ ພະນັກງານດ້ານການເງິນ ຂອງກປສ;
- ພັດທະນາ ແລະ ປັບປຸງ ແບບຟອມມາດຕະຖານ ແລະ ການລາຍງານ ໃຫ້ມີຄວາມເໝາະສົມ;
- ພັດທະນາ ຄູ່ມືແນະນຳດ້ານການບັນຊີ ໃນການຈັດຕັ້ງປະຕິບັດຕົວຈິງສຳລັບລະບົບ ການບັນຊີຂອງຄສລ ແລະ ກປສ.

### 3.1.3 ປັບປຸງ ບັນດາເອກກະສານ ຂອງຄສລ ໃຫ້ສົມບູນ

ກ່ອນອື່ນໝົດ, ບັນດາເອກກະສານ ຈັດຕັ້ງປະຕິບັດໂຄງການ (ແຜນຈັດຕັ້ງປະຕິບັດໂຄງການ, ຄູ່ມືດຳເນີນໂຄງການ, ຄູ່ມືແນະນຳດ້ານວິຊາການ, ຄູ່ມແນະນຳ ດ້ານການຈັດຊື້-ຈັດຈ້າງ ແລະ ຄູ່ມມືແນະນຳດ້ານການເງິນ) ຕ້ອງໄດ້ກວດແກ້ ໂດຍ ໜ່ວຍງານຄຸ້ມຄອງຄສລ, ນຳສະເໜີຕໍ່ ຄະນະກຳມະການຊີ້ນຳໂຄງການສະບັບລ້າສຸດ ເພື່ອການຂໍອະນຸມັດ ຢູ່ກອງປະຊຸມຄະນະກຳມະການຊີ້ນຳ ຄສລ.

### 3.1.4 ການສ້າງສູນຂໍ້ມູນຂ່າວສານແກ່ມວນຊົນ

ຫ້ອງການ ກປສ ຈະສ້າງສູນຂໍ້ມູນຂ່າວສານ ສຳລັບມວນຊົນຂື້ນ ໂດຍມີຈຸດປະສົງເພື່ອໃຫ້ຜູ້ມີສ່ວນຮ່ວມໂຄງການ ສາມາດເຂົ້າເຖິງຂໍ້ມູນຂ່າວສານ ກ່ຽວກັບ ການເຄື່ອນໄຫວຕ່າງໆຂອງກປສ ແລະ ຂໍ້ມູນຂ່າວສານອື່ນໆ ກ່ຽວກັບ ການປົກປັກຮັກສາສິ່ງແວດລ້ອມ. ສ່ວນຄສລຈະໄດ້ຮ່ວມມືຢ່າງໃກ້ສິດກັບຫ້ອງການກປສ ເພື່ອຮັບປະກັນວ່າສູນດັ່ງກ່າວ ມີຄວາມສາມາດດັ່ງນີ້:

- ສະໜອງຂໍ້ມູນ ກ່ຽວກັບ ແບບຟອມ (ເຄື່ອງມື) ຂໍການຊ່ວຍເຫລືອລ້າດ້ານການເງິນ ຈາກຄສລ;
- ສະໜອງເອກກະສານ ແລະ ບົດລາຍງານຕ່າງໆ ໃຫ້ແກ່ມວນຊົນ ກ່ຽວກັບ ໂຄງການ ຍ່ອຍທັງໝົດ ທີ່ໄດ້ຮັບການຊ່ວຍເຫລືອລ້າ ຈາກຄສລ;
- ໃຫ້ການບໍລິການ ແບບສູນຂໍ້ມູນຂ່າວສານສິ່ງແວດລ້ອມທົ່ວໄປ (ເກັບຮັກສາ ແລະ ເກັບ ກຳ, ສ້າງລະບົບຄຸ້ມຄອງ ຂໍ້ມູນຂ່າວສານ, ຈັດພິມ);
- ສະໜອງບົດຮຽນ ແລະ ດ້ານວິຊາການ ໃນການສ້າງຄວາມອາດສາມາດ, ການພັດທະນາຊຸມຊົນ, ການຕິດຕາມກວດກາ ແລະ ການປະເມີຜົນສຳເລັດ;

- ສ້າງຕັ້ງເຄືອຄ່າຍການຮ່ວມມື: ດ້ານການຕະຫລາດ, ການສົ່ງເສີມ, ກຳນົດສະຖານທີ່ ເພື່ອເປັນບ່ອນແລກປ່ຽນສິ່ງພິມ, ຄວາມຮູ້ ແລະ ຂໍ້ມູນຂ່າວສານຕ່າງໆ.

### 3.1.5. ການສ້າງເວັບໄຊ

ກປສ ຈະໄດ້ສ້າງ ແລະ ປັບປຸງ ເວັບໄຊທາງການ ທີ່ເປັນທັງພາສາລາວ ແລະ ອັງກິດ ຊຶ່ງຈະເປັນເຄື່ອງມື ອັນສຳຄັນໃນການເຜີຍແຜ່ ຂໍ້ມູນປກສ ກໍ່ຄື ຄສລ ໄດ້ຢ່າງກວ້າງຂວາງ. ໂດຍສະເພາະແລ້ວ ເວັບໄຊດັ່ງກ່າວ ຈະໄດ້ນຳສະເໜີບົດສັງລວມ ແລະ ລາຍລະອຽດຂອງໂຄງການ ແລະ ກິດຈະກຳທັງໝົດທີ່ໄດ້ຮັບທຶນ ຈາກປກສ ແລະ ຈາກ ຄສລ ລວມທັງບົດລາຍງານການເງິນປະຈຳປີ ທີ່ໄດ້ຜ່ານການກວດສອບ ແລ້ວ.

ນອກຈາກນນີ້ ເວັບໄຊ ດັ່ງກ່າວ ຍັງຈະສະໜອງຂໍ້ມູນ ກ່ຽວກັບ ການສະໜັບສະໜູນ ດ້ານການເງິນທີ່ມີ, ບັນທັດຖານ ແລະ ເງື່ອນໄຂທີ່ຈະຕ້ອງປະຕິບັດຕາມ, ລວມທັງແບບຟອມຕ່າງໆ ທີ່ສາມາດເຂົ້າອັດເອົາໄດ້.

## 3.1.6 ການຝຶກອົບຮົມເບື້ອງຕົ້ນ ໃນການປະຕິບັດໂຄງການ

ການຝຶກອົບຮົມເບື້ອງຕຳນ ໃນການປະຕິບັດໂຄງການ ໄດ້ຈັດຂື້ນ ໃນເດືອນພຶດສະພາ 2006. ຈຸດປະສົງຂອງກອງປະຊຸມນີ້ແມ່ນເພື່ອນຳສະເໜີກ່ຽວກັບ ຄສລ ແກ່ຜູ້ມີສ່ວນຮ່ວມໂຄງການຫລັກ ຈາກບັນດາ ກະຊວງທີ່ກ່ຽວຂ້ອງ ແລະ ສາມແຂວງເປົ້າໝາຍ. ເປົ້າໝາຍສະເພາະ ຂອງກອງປະ ຊຸມແມ່ນເພື່ອ:

- ສະເໜີດ້ານການຄຸ້ມຄອງການເງິນ ແລະ ການເບີກຈ່າຍຕາມຂັ້ນຕອນ;
- ສະເໜີ ລະບົບ ການຄຸ້ມຄອງການເງິນ ແລະ ການເບີກຈ່າຍ;
- ສະເໜີຂັ້ນຕອນການຈັດຊື້;
- ສະເໜີ ລະບົບ ການຈັດຊື້;
- ພາບລວມຂອງການປະຕິບັດໂຄງການ ໂດຍອີງປະກອບຕ່າງໆ ເຊັ່ນ (ບ້ວງນະໂຍບາຍ-PICE ແລະ ບ້ວງຊີວະນາໆພັນ-CBI); ແລະ
- ຖອດຖອນບົດຮຽນຈາກການປະຕິບັດໂຄງການອື່ນໆ ຂອງທະນາຄານໂລກ

## 3.1.6 ດຳເນີນກອງປະຊຸມແຈ້ງຈຸດປະສົງໂຄງການ

***ເປົ້າໝາຍ:*** ເພື່ອນຳສະເໜີ ກ່ຽວກັບ ຄສລ ໃຫ້ແກ່ຜູ້ເຂົ້າຮ່ວມເປົ້າໝາຍ;

***ກິດຈະກຳຫລັກ:*** ສະເໜີພາບລວມ ຂອງ ໂຄງການ ຄສລ ລວມທັງມີ:

- ລະບົບການຈັດຕັ້ງ, ການເງິນ ແລະ ການຈັດຊື້-ຈັດຈ້າງ;

- 5 ກິດຈະກຳ ບ້ວງນະໂຍບາຍ ລວມທັງຂອບວຽກຕ່າງໆ ໂດຍສະເພາະຂອບວຽກຂອງ ຂະແໜງການ ພະລັງງານນ້ຳ, ການຄຸ້ມຄອງອ່າງຮັບນ້ຳແບບປະສົມປະສານ ແລະ ການຍົກຍ້າຍຈັດສັນ;
- ກິດຈະກຳ ບ້ວງຊີວະນາໆພັນ ຊຶ່ງປະກອບດ້ວຍກິດຈະກຳປ່າສະຫງວນ, ການອະນຸລັກຊີວະນາໆພັນ ແລະ ຊຸມຊົນ ຂະນາດນ້ອຍ;
- ບົດແນະນຳດ້ານວິຊາການ ແລະ ມາດຕະຖານແບບຟອມ ຂໍການຊ່ວຍເຫລືອລ້າ.

ຜູ້ເຂົ້າຮ່ວມທີ່ເປັນເປົ້າໝາຍ ໃນກອງປະຊຸມດັ່ງກ່າວ: ສະພາບໍລິຫານ ກປສ, ຄະນະກຳມະການຊີ້ນຳຄສລ, ຄະນະກຳມະການຊີ້ນຳການຈັດຕັ້ງປະຕິບັດ ຍຸດທະສາດ ແຫ່ງການເຕີບໂຕ ແລະ ຫລຸດຜ່ອນຄວາມທຸກຍາກ ແຫ່ງຊາດ, ອວຕສ, ກະຊວງທີ່ກ່ຽວຂ້ອງ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງມະຫາຊົນ, ສາມແຂວງ ເປົ້າໝາຍ ແລະ ອົງການຈັດຕັ້ງສາກົນ.

### 3.1.8. ສ້າງລະບົບການປະເມີນຜົນ ແລະ ການຕິດຕາມກວດກາ

ການຕິຕາມກວດກາໂຄງການ ແມ່ນໜ້າທີ່ຄວາມຮັບຜິດຊອບຂອງ ໜ່ວຍງານຄຸ້ມຄອງຄສລ ພາຍໃຕ້ການຊີ້ນຳ ຂອງຄະນະກຳມະການຊີ້ນຳ ຄສລ ແລະ ສະພາບໍລິຫານ ປກສ (ຫ້ອງການ ບໍລິຫານ ປກສ). ບົດລາຍງານການເຄື່ອນໄຫວດັ່ງກ່າວ ຈະຕ້ອງໄດ້ກະກຽມຢ່າງເປັນປົກກະຕິ ແລະ ນຳສະເໜີໃຫ້ທະນາຄານໂລກ ຕາມທີ່ໄດ້ກຳນົດໄວ້ໃນແຜນຈັດຕັ້ງປະຕິບັດຄສລ. ນອກນັ້ນ, ຍັງຈະຕ້ອງໄດ້ລາຍງານຄວາມຄືບໜ້າ ແລະ ຜົນສຳເລັດ ໃນການປະສານງານການປະ ຕິບັດໂຄງການຍ່ອຍ ຕໍ່ກອງປະຊຸມຖອດຖອນບົດຮຽນປະຈຳປີ.

ລະບົບການຕິດຕາມກວດກາ ຈະຕ້ອງໄດ້ສ້າງຂື້ນ ພາຍໃນສົກປີງົບປະມານ 2006-07. ລະບົບດັ່ງກ່າວ ຈະປະກອບດ້ວຍການຄຸ້ມຄອງໂຄງການໂດຍລວມ. ນອກຈາກນີ້ ຍັງຈະໄດ້ສຸມໃສ່ ເປົ້າໝາຍການຈັດປະຕິບັດ (ຕົວຊີ້ວັດ) ທີ່ໄດ້ເຫັນດີນຳກັນແລ້ວ ດັ່ງທີ່ລະບຸໃນແຜນຈັດຕັ້ງປະຕິບັດໂຄງການ (ເບິ່ງເອກະສານເພີ່ມເຕີມ II).

## 3.2 ການກະກຽມ ແລະ ປະຕິບັດ ກິດຈະກຳສະໜັບສະໜູນ ສຳລັບໂຄງການຍ່ອຍ

### 3.2.1. ການກະກຽມດ້ານວິຊາການ ພາຍໃຕ້ບ້ວງນະໂຍບາຍ ແລະ ຊີວະນາໆພັນ

ປະການທີໜຶ່ງ, ໜ່ວຍງານຄຸ້ມຄອງໂຄງການ ຈະໄດ້ຮ່າງບົດແນະນຳ ດ້ານວິຊາການ ທີ່ງ່າຍດາຍ ພ້ອມດ້ວຍແບບຟອມຂໍການສະໜັບສະໜູນ. ພາຍຫລັງທີ່ບົດແນະນຳຕ່າງໆເຫລົ່ານີ້ ໄດ້ຖືກຮັບຮອງ ໂດຍກອງປະຊຸມ ຄັ້ງທຳອິດຂອງຄະນະກຳມະການຊີ້ນຳຄສລແລ້ວ, ກໍຈະໄດ້ຈັດພິມ ເປັນປື້ມນ້ອຍ ແລະ ແຈກຢາຍ ໃຫ່ໜ່ວຍງານທີ່ກ່ຽວຂ້ອງ ແລະ ບັນດາແຂວງເປົ້າໝາຍ.

ປະການທີສອງ, ໜ່ວຍງານຄຸ້ມຄອງໂຄງການ ຈະໄດ້ຈັດຝຶກອົບຮົມ ວິຊາການ ກ່ຽວກັບ ການຮ່າງບົດສະເໜີ ແກ່ຜູ້ມີສ່ວນຮ່ວມຫລັກ ໃນລະດັບແຂວງ. ໃນຂະນະດຽວກັນນັ້ນ, ກໍ່ຕ້ອງໄດ້ດຳເນີນການກຳນົດນະໂຍບາຍ ການສະໜອງທຶນ ແລະ ການເຜີຍແຜ່ ກ່ຽວກັບ ບ້ວງທຶນສະໜັບສະໜູນທີ່ມີແລ້ວ ສຳລັບ ໂຄງການຍ່ອຍ. ພ້ອມດຽວກັນນັ້ນ, ການໃຫ້ຂ່າວ ກ່ຽວກັບ ການສະໜອງທຶນ ສະໜັບສະໜູນ ໃຫ້ແກ່ໂຄງການຍ່ອຍ ໂດຍຜ່ານວິທີການປຶກສາຫາລືເປັນ ກັບສ່ວນບຸກຄົນ, ການຕິດຕໍ່ທາງໂທລະສັບ ແລະ ໂດຍຜ່ານ ການປະສານງານເປັນປະຈຳ ກັບບັນດາຂະແໜງການ. ແລະ ຜ່ານຂະບວນການໄປທັດສະນະສຶກສາ ຂອງຄະນະວິຊາກການ ແລະ ສຳລັບຄະນະກຳມະການຊີ້ນຳໂຄງການ.

## 3.2.2. ສ້າງບົດແນະນຳ ວິຊາການເພື່ອລິເລີ່ມການກຽມບົດສະເໜີຂໍທຶນຊ່ວຍເຫລືອຈາກຄສລ

ໜ່ວຍງານຄຸ້ມຄອງໂຄງການ ຈະເປັນຜູ້ກຳນົດບົດແນະນຳຕ່າງໆເຫລົ່ານີ້ຕື່ມ ໂດຍອີງໃສ່ແຜນການລົງທຶນ ຂອງລັດ ແລະ ບົດແນະນຳ ຂອງອົງການຜູ້ໃຫ້ທຶນອື່ນໆ ເຊັ່ນ: ທຶນຊ່ວຍເຫລືອລ້າຂະໜາດນ້ອຍ ຂອງທະນາຄານໂລກ ພາຍໃຕ້ແຜນງານການພັດທະນາການຕະຫລາດ, ແຜນງານການຫລຸດຜ່ອນຄວາມຍາກຍາກ ຂອງສປປ ລາວ, ແຜນງານອາຫານທາງໄກ (Telefood) ຂອງອົງການ FAO ແລະ ອື່ນໆ.

## 3.2.3 ກຳນົດຂອບວຽກບ້ວງນະໂຍບາຍຄັ້ງລ້າສຸດ (ການຄຸ້ມຄອງອ່າງຮັບນ້ຳແບບປະສົມປະສານ, ການຈັດສັນຍົກຍ້າຍ, ແລະ ຂະແໜງການພະລັງງານໄຟຟ້າ

ໜ່ວຍງານຄຸ້ມຄອງໂຄງການ ຈະຈັດກອງປະຊຸມປຶກສາຫາລື ຄັ້ງສຸດທ້າຍ ເພື່ອຂໍຄຳເຫັນ ແລະສັງລວມຂອບວຽກທັງໝົດເປັນຄັ້ງສຸດທ້າຍ. ຜູ້ເຂົ້າຮ່ວມແມ່ນຈະມາຈາກ ພາກສ່ວນທີ່ກ່ຽວຂ້ອງ ຫລືຂະ ແໜງການຜູ້ຮັບຜົນປະໂຫຍດ.

## 3.2.4. ການເຮັດສັນຍາໂຄງການຍ່ອຍຄັ້ງທຳອິດ

ຄາດວ່າຈະອອກຂໍ້ຕົກລົງ ທຶນຊ່ວຍເຫລືອລ້າຄັ້ງທຳອິດໃນໄຕມາດທີໜຶ່ງ ຂອງສົກປີງົບປະມານ 2006-2007. ໂຄງການຍ່ອຍດັ່ງກ່າວ ຈະຕ້ອງສອດຄ່ອງກັບເປົ້າໝາຍ ຂອງຄສລ. ການສະໜັບ ສະໜູນດ້ານການເງິນໂຄງການ ຄສລນັ້ນ ຈະຈຳກັດສະເພາະ ທຶນຊ່ວຍເຫລືອລ້າໂດຍບໍ່ຈຳເປັນສົ່ງ ຄືນ. ລາຍລະອຽດ ກ່ຽວກັບ ການຂໍທຶນ, ການຄັດເລືອກ ແລະການຄຸ້ມຄອງໂຄງການຍ່ອຍ ແມ່ນໄດ້ ອະທິບາຍ ໄວ້ໃນຄູ່ມື ການດຳເນີນງານ.

ຕາຕະລາງຕໍ່ໄປນີ້ ໄດ້ສະແດງໃຫ້ເຫັນທຶນຊ່ວຍເຫລືອລ້າສຳລັບໂຄງການຍ່ອຍ ທີ່ຈະໄດ້ເຮັດສັນຍາ ແລະ ຄາດຄະເນການເບີກຈ່າຍຕາມລຳດັບ ສຳລັບທຶນຊ່ວຍເຫລືອລ້າ ສຳລັບໂຄງການຍ່ອຍ ໃນສົກ ງົບປະມານ2006-2007. ແຕ່ຄວນເຂົ້າໃຈວ່ານີ້ເປັນພຽງການຄາດຄະເນແບບລວມໆ ເຊິ່ງໄດ້ກຳນົດຂຶ້ນຕາມຄວາມເປັນຈິງ ບົນພື້ນຖານການສະເໜີຂໍການຊ່ວຍເຫລືອ ມາຫາຄສລ.

ຄາດຄະເນການເຮັດສັນຍາ ແລະ ການເບີກຈ່າຍ ທຶນຊ່ວຍເຫລືອລ້າ ສຳລັບໂຄງການຍ່ອຍ ສຳລັບສົກປີງົບປະມານ 2006-2007

| ປະເພດທຶນຊ່ວຍເຫຼືອລ້າ | ຄາດຄະເນບົດຂໍທຶນຊ່ວຍເຫຼືອລ້າ ສຳລັບໂຄງການຍ່ອຍ ປະຈຸບັນ | ຍອດທຶນຄາດຄະເນຕາມບົດສະເໜີ (ໂດລາ ສຫລ) | ຄາດຄະເນການອະນຸມັດໃນສົກປີ 2006-2007 (ໂດລາ ສຫລ) |
|---|---|---|---|
| ໂຄງການຍ່ອຍຂະໜາດໃຫຍ່ຈາກບ້ວງນະໂຍບາຍ | 4 | 1,000,000 | 360,000 |
| ໂຄງການຍ່ອຍຂະໜາດນ້ອຍຈາກບ້ວງນະໂຍບາຍ | 15 | 120,000 | 50,000 |
| ລວມ: | | **1,120,000** | **410,000** |
| | | | |
| ໂຄງການຍ່ອຍຂະໜາດໃຫຍ່ຈາກບ້ວງຊີວະນາໆພັນ | 14 | 600,000 | 200,000 |
| ໂຄງການຍ່ອຍຂະໜາດນ້ອຍຈາກບ້ວງຊີວະນາໆພັນ | 24 | 200,000 | 120,000 |
| ລວມ: | | **800,000** | **320,000** |
| | | | |
| ລວມຍອດ: | **47** | **1,920,000** | **730,000** |

## 3.3 ການປະຕິບັດຂໍ້ຮຽກຮ້ອງອື່ນໆຂອງໂຄງການ

### 3.3.1 ການກະກຽມ ບົດລາຍງານການຕິດຕາມກວດກາ ດ້ານການເງິນ

ຫ້ອງການຄຸ້ມຄອງ-ບໍລິຫານໂຄງການ ຈະໄດ້ກະກຽມບົດລາຍງານ ດ້ານການເງິນ ເປັນປົກກະຕິ ໂດຍອີງຕາມ ຕາຕະລາງທີ່ໄດ້ສະເໜີໄວ້ໃນຄູ່ມືການດຳເນີນງານ ຂອງຄສລ ຊຶ່ງປະກອບດ້ວຍ ບົດ ລາຍງານ ດ້ານການເງິນ ປະຈຳໄຕມາດ ແລະ ປະຈຳປີ. ພາຍຫລັງທີ່ໄດ້ທົບທວນ ແລະ ລົງລາຍເຊັນຮັບຮອງ ໂດຍຄະນະກຳມະການຊີ້ນຳຄສລແລ້ວ ຈະຕ້ອງໄດ້ສະເໜີບົດລາຍງານທັງໝົດ ໃຫ້ແກ່ ຄະນະສະພາບໍລິຫານ ກປສ, ທະນາຄານໂລກ.

### 3.3.2 ການກະກຽມບົດລາຍງານປະຈຳປີ

ໜ່ວຍງານຄຸ້ມຄອງໂຄງການ ຈະຕ້ອງໄດ້ລາຍງານ ກິດຈະກຳຕ່າງໆ ຂອງຄສລ ໃຫ້ແກ່ ກປສ ໂດຍຜ່ານຄະນະກຳມະການຊີ້ນຳຄສລ. ຢ່າງໜ້ອຍສຸດ ບົດລາຍງານດັ່ງກ່າວ ຈະຕ້ອງປະກອບດ້ວຍ:

- ສັງລວມສະພາບການ ແລະ ກິດຈະກຳຕ່າງໆ ຂອງຄສລ;
- ລາຍຊື່ໂຄງການ ແລະ ກິດຈະກຳທັງໝົດທີ່ໄດ້ຮັບການສະໜັບສະໜູນຈາກ ຄສລ;
- ສັງລວມສະພາບການເງິນຂອງຄສລ;
- ສັງລວມ ບັນຫາສຳຄັນທີ່ຕ້ອງໄດ້ນຳມາປຶກສາຫາລືກັນ ແລະ ມີຄວາມເຫັນຕັດສິນ ໂດຍຄະນະກຳມະການຊີ້ນຳ ຄສລ ຫລື/ແລະ ສະພາບໍລິຫານ ກປສ.

ບົດລາຍງານສະບັບນີ້ ຈະໄດ້ຈັດນຳສະເໜີຜ່ານສື່ມວນຊົນຕ່າງໆເຊັ່ນ: ຜ່ານທາງວິທະຍຸ ແລະ ໂທລະພາບ, ຈົດໝາຍຂ່າວ ສິ່ງແວດລ້ອມ ອວຕສ.

### 3.3.3 ການກະກຽມແຜນດຳເນີນງານ ປະຈຳປີ

ໜ່ວຍງານຄຸ້ມຄອງໂຄງການ ຈະໄດ້ກະກຽມແຜນດຳເນີນງານປະຈຳປີ ເປັນເອກະສານວາງແຜນການທີ່ສຳຄັນສຸດສຳລັບຄສລ ເຊິ່ງປະກອບດ້ວຍ:

- ***ແຜນການເຄື່ອນໄຫວປະຈຳປີ:*** ແຜນການເຄື່ອນໄຫວປະຈຳປີ ແມ່ນມີຈຸດປະສົງ ທີ່ແນໃສ່ ເພື່ອແນະນຳ ແລະ ໃຫ້ທິດທາງອັນຈະແຈ້ງ, ວາງຈຸດສຸມ ແລະ ຈັດລຽງບູລິມະສິດ ໃນການອະນຸມັດວັດຖຸອຸປະກອນຕ່າງໆ ຈາກຄສລ ໂດຍໃຫ້ສອດຄ່ອງ ກັບສັນຍາຊ່ວຍເຫລືອລ້າ ຂອງ ຄສລ. ແຜນເຄື່ອນໄຫວປະຈຳປີດັ່ງກ່າວ ແມ່ນຈະໄດ້ອະນຸມັດ ໂດຍຄະນະກຳມະການຊີ້ນຳຄສລ ເປັນລາຍປີ ຕາມວັນເວລາທີ່ໄດ້ກຳນົດ ໃນແຕ່ລະປີ.

- ***ແຜນລາຍຮັບ ແລະ ລາຍຈ່າຍ ປະຈໍາປີ:*** ແຜນລາຍຮັບ ແລະ ລາຍຈ່າຍປະຈໍາປີ ແມ່ນແຜນທປະກອບໃສ່ແຜນເຄື່ອນໄຫວປະຈໍາປີ ແລະ ຕ້ອງໄດ້ຮັບການອະນຸມັດ ຈາກສະພາບໍລິຫານ ກປສ ເປັນລາຍປີ ຕາມວັນເວລາທີ່ໄດ້ກໍານົດ ໃນແຕ່ລະປີ.

### 3.3.4 ການກວດສອບດ້ານການເງິນ

ຫ້ອງການ ກປສ ຈະໄດ້ຈ້າງບໍລິສັດກວດສອບບັນຊີພາຍນອກ ເພື່ອກະກຽມການກວດສອບບັນຊີປະຈໍາປີ ຊຶ່ງຈະຕ້ອງໄດ້ປະຕິບັດຕາມາດຖານ ແລະ ຂໍ້ປະຕິບັດ ຂອງສາກົນ ທີ່ໄດ້ຮັບການຮັບຮອງໂດຍທົ່ວໄປ. ໂດຍປົກກະຕິແລ້ວ ການກວດສອບບັນຊີດັ່ງກ່າວ ຕ້ອງໄດ້ເລີ່ມປະຕິບັດໃນ ກາງເດືອນຕຸລາ ເພື່ອອະນຸຍາດໃຫ້ມີຄວາມພ້ອມໃນການນໍາສະເໜີງົບການເງິນ ທີ່ໄດ້ກວດສອບ ແລ້ວຕໍ່ກອງປະຊຸມ ສະພາບໍລິຫານ ທີ່ໄດ້ກໍານົດໃສ່ເດືອນມີນາ.

ການກວດສອບຈະຕ້ອງປະກອບດ້ວຍ ບົດທົບທວນບັນຊີທະນາຄານ ຂອງຄສລທັງໝົດ, ບົດທົບທວນການກວດສອບ ແລະ ການດໍາເນີນງານພາຍໃນບ້ວງການເງິນພິເສດ, ລວມທັງການຈັດປະຕິບັດ ໃນການຄຸ້ມຄອງ ແລະ ການເງິນອື່ນໆ ຕາມທີ່ຜູ້ກວດສອບ ບັນຊີເຊື່ອວ່າຖືກຕ້ອງ ແລະ ຮັບປະກັນໄດ້.

### 3.3.5. ການຈັດກອງປະຊຸມ ຄະນະກໍາມະການຊີ້ນໍາຄສລ

ຈະໄດ້ຈັດກອງປະຊຸມຄະນະກໍາມະການຊີ້ນໍາຄສລ ໃນແຕ່ລະງວດ. ຈຸດປະສົງຫລັກ ຂອງກອງປະຊຸມ ແມ່ນເພື່ອອະນຸມັດ:

- ແຜນວຽກປະຈໍາປີຂອງໂຄງການ;
- ແຜນປະຕິບັດໂຄງການປະຈໍາປີ ແລະ ແຜນງົບປະມານປີ;
- ລະບຽບການກ່ຽວກັບກິດຈະກໍາຫລັກໃນແຕ່ລະກອງປະຊຸມ ຄະນະກໍາມະການ ຊີ້ນໍາ ຄສລ;
- ວິທີການຮ່ວມມື ທີ່ເໝາະສົມ ລະຫວ່າງຄສລ, ພະນັກງານທ້ອງຖິ່ນ, ອົງການຈັດຕັ້ງສັງຄົມ, ມວນຊົນທົ່ວໄປ ແລະ ອົງການຈັດຕັ້ງມະຫາຊົນ.

# 4. ແຜນດ້ານລາຍຮັບ ແລະ ລາຍຈ່າຍ

## 4.1 ພາກສະເໜີ

ງົບປະມານທີ່ໄດ້ຄາດຄະເນໄວ້ ສໍາລັບງວດ III ແລະ IV ສໍາລັບສົກປີງົບປະມານ 2005-2006 ແລະ 2006-20007 ນັ້ນ ແມ່ນໄດ້ສະເໜີໄວ້ ໃນພາກ 4.2. ແລະ 4.3 ຕາມລໍາດັບ.

ການຄາດຄະເນງົບປະມານນັ້ນ ແມ່ນອີງໃສ່ ງົບປະມານທີ່ຂຶ້ນໄວ້ໃນການກະກຽມແຜນປະຕິບັດຄສລດັ່ງນີ້:

## 4. 2 ການຄາດຄະເນງົບປະມານ ສຳລັບ ໄຕມາດ 3rd ແລະ 4th ຂອງສົກງົບປະມານ 2005-2006

| ຈຳນວນອົງປະກອບ / ຜົນຮັບ & ກິດຈະກຳຕ່າງໆ | ຈຸດປະສົງ ແລະ ກິດຈະກຳຫລັກ | ງົບປະມານ ໂດລາ ສຫລ | ຕົວຊີ້ບອກຜົນຮັບ/ການຕິດຕາມ | ຜົນຮັບຂອງໂຄງການ ເປັນຂໍ້ມູນຂ່າວສານ | ຄຳເຫັນຕ່າງໆ |
|---|---|---|---|---|---|
| ອົງປະກອບ 1 | ການປະຕິບັດນະໂຍບາຍ ແລະ ປັບປຸງຄວາມອາດສາມາດ (PICE) | | | | |
| ກິດຈະກຳ 1.1 | ປະສານສົມທົບ, ອຳນວຍຄວາມສະດວກ ແລະ ປຶກສາ ຫາລື ກັບບັນດາຂະແໜງການຫລັກ, ແຂວງເປົ້າໝາຍ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ເພື່ອກະກຽມບົດສະເໜີ ຂໍການຊ່ວຍເຫລືອລ້າ ຈາກທັງ 2 ບ້ວງ ວິຊາການ | 0 | ການສົນທະນາ, ການກະກຽມ, ກອງປະຊຸມປຶກສາຫາລືພາຍໃນ, ທົບທວນໂດຍ WMU, WB, ການສະເໜີ | ຮ່າງ, ການທົບທວນ, ຄຳເຫັນກັບ ແລະ ການອະນຸມັດ | |
| ກິດຈະກຳ 1.2 | ຮ່າງບົດແນະນຳວິຊາການ ສຳລັບການ ກະກຽມບົດສະເໜີທີ່ຈະໄດ້ຮັບທຶນຈາກ ຄສລ. | 0 | ການສົນທະນາ, ການປຶກສາຫາລື, ການທົບທວນໂດຍ CTMA, ກ່ອນອື່ນຕ້ອງນຳສະເໜີຕໍ່ກອງປະຊຸມຄະນະກຳມະການຊີ້ນຳຄສລ ເພື່ອຂໍອະນຸມັດ | ຮ່າງ, ການທົບທວນ, ຄຳເຫັນກັບ ແລະ ການອະນຸມັດ | ວຽກຫ້ອງການ |
| ກິດຈະກຳ 1.3 | ຮ່າງແຜນພັບ ຂອງ ຄສລ, ຂອງບ້ວງນະໂຍບາຍ ແລະ ບ້ວງຊີວະນາໆພັນ | 0 | ການສົນທະນາ ພາຍໃນຫ້ອງການ ຄສລ, ອວຕສ | ແຜນພັບ | ວຽກຫ້ອງການ |
| ກິດຈະກຳ 1.4 | ລົງຢ້ຽມຢາມເຂດທີ່ສະເໜີຂໍໂຄງການຢູ່ແຂວງບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ ເພື່ອປຶກສາລ່ວງໜ້າກ່ຽວກັບການກະກຽມທຶນຊ່ວຍເຫລືອບ້ວງນະໂຍບາຍ | 0 | ເພື່ອປຶກສາຫາລື ຄວາມຄືບໜ້າຂອງ ບົດສະເໜີກັບຜູ້ຂໍທຶນຕ່າງໆ ແລະ ຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງ; ປຶກສາກ່ຽວກັບການເກັບຂໍ້ມູນເພື່ອປັບປຸງບົດສະເໜີຂໍທຶນ sub grant ທີ່ກ່ຽວຂ້ອງ; ເຂົ້າຮ່ວມ ການອົບຮົມ WMPA (WCS) ແລະ ແລກປ່ຽນ ປະສົບການຂອງການອະນຸລັກພື້ນຖານ | ຂໍ້ມູນເພື່ອປັບປຸງບປຸງບົດສະເໜີ ຂໍທຶນ sub grant ທີ່ກ່ຽວຂ້ອງ | ຈ່າຍໂດຍ C3: ການບໍລິການວິຊາການຕ່າງໆ: ການສ້າງລະບົບຄຸ້ມຄອງຂໍ້ມູນ (ສູນຂໍ້ມູນ, ຖານ ຂໍ້ມູນ, ແລະ ເວັບໄຊດ໌) |

| ຈຳນວນອົງປະກອບ / ຜົນຮັບ & ກິດຈະກຳຕ່າງໆ | ຈຸດປະສົງ ແລະ ກິດຈະກຳຫລັກ | ງົບປະມານ ໂດລາ ສຫລ | ຕົວຊີ້ບອກຜົນຮັບ/ການຕິດຕາມ | ຜົນຮັບຂອງໂຄງການ ເປັນຂໍ້ມູນຂ່າວສານ | ຄຳເຫັນຕ່າງໆ |
|---|---|---|---|---|---|
